ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ສູນບໍລິຫານລັດດີຈີຕອນ

ເລກທີ 399 /ສລດ

ນະຄອນຫຼວງວຽງຈັນ, ວັນທີ 14 ພຶດສະພາ 2026

# ໜັງສືແຈ້ງເຊີນປະມູນ

1. ສູນບໍລິຫານລັດດີຈີຕອນ ຕາງໜ້າ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເຊິ່ງໄດ້ຮັບອະນຸມັດງົບປະມານ ໂຄງການລົງທຶນຂອງລັດ ປະຈຳປີ 2026 ໃນການຈັດຊື້-ຈັດຈ້າງ ໂຄງການພັດທະນາລະບົບຟອມພາກລັດ (G-form) ເວລາສົ່ງມອບ: ສິນຄ້າທັງໝົດຕ້ອງສົ່ງໃຫ້ຜູ້ຈັດຊື້ພາຍໃນ 60 ວັນເລີ່ມແຕ່ວັນທີເຊັນສັນຍາ ແລະ ສັ່ງໃຫ້ເລີ່ມວຽກ. ສະນັ້ນ, ຈຶ່ງແຈ້ງເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທີ່ເໝາະສົມ ໃນການອອກແບບ, ຕິດຕັ້ງ ແລະ ດຳເນີນການພັດທະນາລະບົບຟອມ (ເຊັ່ນ: google form, Microsoft form ແລະ ອື່ນໆ) ຫຼື ລະບົບຊອບແວ, ພັດທະນາແອັບສຳລັບມືຖື ແລະ ຝຶກອົບຮົມທາງດ້ານເຕັກນິກ ແລະ ການຄຸ້ມຄອງຊອບແວ ຫຼື ເວັບໄຊໄດ້ ເຂົ້າຮ່ວມການປະມູນ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນແບບເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້ - ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ ລົງວັນທີ 13 ກຸມພາ 2019;
3. ການປະມູນຄັ້ງນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທີ່ເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການພັດທະນາລະບົບຟອມ ຫຼື ລະບົບຊອບແວ, ພັດທະນາແອັບສຳລັບມືຖື ແລະ ຝຶກອົບຮົມທາງດ້ານເຕັກນິກ ແລະ ການຄຸ້ມຄອງຊອບແວ ຫຼື ເວັບໄຊ ດັ່ງກ່າວ;
4. ການປະມູນ ແມ່ນນຳໃຊ້ ຂັ້ນຕອນດຽວ ຊອງປະມູນປະກອບມີ: 1. ຊອງເຕັກນິກ, 2 ຊອງລາຄາ (ຕົ້ນສະບັບ 01 ຊຸດ ແລະ ກອບປີ້ 01 ຊຸດ);
5. ຕ້ອງປະກອບເອກະສານປະມູນຕາມແບບຟອມສະເໜີລາຄາທີ່ເຈົ້າຂອງໂຄງການກຳນົດໃຫ້ຄົບຖ້ວນ (ມູນຄ່າສະເໜີແມ່ນລວມຄ່າພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ);
6. ບໍລິສັດທີ່ມີຄຸນນະວຸດທີ່ເໝາະສົມ ແລະ ມີຄວາມສົນໃຈເຂົ້າຮ່ວມການປະມູນ ສາມາດຕິດຕໍ່ພົວພັນຊື້ເອກະສານການປະມູນຄົບຊຸດໄດ້ທີ່ສູນບໍລິຫານລັດດີຈີຕອນ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຕັ້ງຢູ່ບ້ານ: ສີສະເກດ, ເມືອງ: ຈັນທະບູລີ, ນະຄອນຫຼວງວຽງຈັນ, ເບີໂທຕິດຕໍ່: 021 316600, 020 23416665, ເລີ່ມຂາຍຊອງແຕ່ວັນທີ 18 ພຶດສະພາ 2026 ເຖິງວັນທີ 30 ມິຖຸນາ 2026 (ໃນວັນລັດຖະການ, ເວລາ 08:00 – 16:00 ໂມງ);
7. ຊອງປະມູນຕ້ອງສົ່ງກ່ອນ 09 ໂມງ ຂອງ ວັນທີ 30 ມິຖຸນາ 2026, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ເວລາເປີດຊອງປະມູນແມ່ນ 09:00 ໂມງ ຂອງວັນດຽວກັນ ທີ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານ (ຕຶກສີສະເກດ) ໂດຍຊ້ອງໜ້າຄະນະກຳມະການ ການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ເຂົ້າຮ່ວມ;
8. ທຸກໆຊອງປະມູນຕ້ອງໄດ້ມີການຄ້ຳປະກັນການປະມູນດ້ວຍແຊັກ (VISA) ບໍ່ໃຫ້ຫຼຸດ 2% ຂອງລາຄາສະເໜີເຂົ້າປະມູນ.

**ຫົວໜ້າສູນ**

**(ຫົວໜ້າຄະນະຄຸ້ມຄອງໂຄງການ)**

ປອ. ທະວີສັກ ມະໂນທັນ